**ມິຊຊາສົມໂພດພຣະເຢຊູເຈົ້າບັງເກີດ**

**ວັນທີ 25 ທັນວາ 2022**



**ພຣະວໍລະສານໂດຍນັກບຸນຢວງ 1, 1-18**

ແຕ່ຕົ້ນເດີມມີພຣະວາຈາຢູ່ແລ້ວ, ພຣະວາຈາຢູ່ນຳພຣະເປັນເຈົ້າແລະພຣະວາຈາກໍເປັນພຣະເປັນເຈົ້າດ້ວຍ. ພຣະອົງຢູ່ນຳພຣະເປັນເຈົ້າແຕ່ຕົ້ນເດີມ, ພຣະອົງໄດ້ຊົງສ້າງທຸກສິ່ງທຸກຢ່າງແລະຖ້າພຣະອົງບໍ່ສ້າງກໍບໍ່ມີຫຍັງເກີດຂຶ້ນມາໄດ້. ຊີວິດຢູ່ໃນພຣະອົງແລະຊີວິດນັ້ນແມ່ນຄວາມສະຫວ່າງຂອງມະນຸດ. ຄວາມສະຫວ່າງນັ້ນຮຸ່ງແຈ້ງຂຶ້ນໃນຄວາມມືດ ແຕ່ຄວາມມືດບໍ່ສາມາດເຂົ້າໃຈຄວາມສະຫວ່າງນັ້ນໄດ້. ມີຄົນຜູ້ໜຶ່ງຊື່ຢວງທີ່ພຣະເປັນເຈົ້າຊົງໃຊ້ມາ, ທ່ານມາເປັນພິຍານເພື່ອຢັ້ງຢືນເຖິງຄວາມສະຫວ່າງ; ເພື່ອໃຫ້ມະນຸດທັງຫລາຍເຊື່ອດ້ວຍອາໄສທ່ານ. ທ່ານເອງບໍ່ແມ່ນຄວາມສະຫວ່າງ ແຕ່ທ່ານມາເພື່ອຢັ້ງຢືນເຖິງຄວາມສະຫວ່າງ.

ພຣະວາຈາ ຜູ້ແມ່ນຄວາມສະຫວ່າງແທ້ທີ່ສ່ອງສະຫວ່າງໃຫ້ມະນຸດທຸກຄົນ ກໍໄດ້ສະເດັດມາໃນໂລກ, ພຣະອົງໄດ້ສະຖິດຢູ່ໃນໂລກ, ໂລກນັ້ນກໍແມ່ນພຣະອົງໄດ້ຊົງສ້າງ ແຕ່ໂລກບໍ່ຮັບຮູ້ພຣະອົງ. ພຣະອົງໄດ້ສະເດັດມາໃນບ້ານເມືອງຂອງພຣະອົງ ແຕ່ຊາວບ້ານຊາວເມືອງນັ້ນບໍ່ໄດ້ຕ້ອນຮັບ. ແຕ່ສ່ວນບັນດາຜູ້ທີ່ຕ້ອນຮັບພຣະອົງ, ທີ່ເຊື່ອພຣະນາມຂອງພຣະອົງ, ພຣະອົງກໍປະທານສິດໃຫ້ເປັນບຸດຂອງພຣະເປັນເຈົ້າ. ພຣະອົງຜູ້ບໍ່ໄດ້ເກີດຈາກເລືອດຢາງ, ຈາກຄວາມປາດຖະໜາຂອງເນື້ອໜັງ ແລະຈາກຄວາມປາດຖະໜາຂອງຄົນ, ແຕ່ໄດ້ເກີດມາຈາກພຣະເປັນເຈົ້າ.

ແລະພຣະວາຈາເຈົ້າໄດ້ບັງເກີດເປັນມະນຸດ ແລະໄດ້ສະຖິດຢູ່ກາງພວກເຮົາ; ພວກເຮົາໄດ້ເຫັນສີມຸງຄຸນຂອງພຣະອົງ ອັນແມ່ນສີມຸງຄຸນຂອງພຣະບຸດອົງດຽວຂອງພຣະບິດາ. ພຣະອົງເຕັມພຽບດ້ວຍພຣະຄຸນແລະຄວາມຈິງ. ທ່ານຢວງໄດ້ຢັ້ງຢືນເຖິງພຣະອົງດ້ວຍຮ້ອງປະກາດວ່າ: "ທ່ານຜູ້ນີ້ ແມ່ນຜູ້ທີ່ຂ້າພະເຈົ້າໄດ້ກ່າວໄວ້ແລ້ວວ່າ: ຜູ້ຈະມານຳຫລັງຂ້າພະເຈົ້າໄດ້ລື່ນຂ້າພະເຈົ້າ. ຍ້ອນວ່າພຣະອົງເປັນຢູ່ກ່ອນຂ້າພະເຈົ້າແລ້ວ." ແມ່ນຈາກຄວາມສົມບູນຂອງພຣະອົງນີ້ແລ້ວ, ພວກເຮົາທຸກຄົນຈຶ່ງໄດ້ຮັບພຣະຄຸນຕິດຕໍ່ກັນມາຢ່າງບໍ່ຂາດ. ຍ້ອນວ່າພຣະທຳບັນຍັດໄດ້ມາໂດຍທາງໂມແຊ, ແຕ່ພຣະຄຸນແລະຄວາມຈິງນັ້ນ ເຮົາໄດ້ຮັບໂດຍທາງພຣະເຢຊູກຣິສໂຕເຈົ້າ. ບໍ່ມີໃຜໄດ້ເຫັນພຣະເປັນເຈົ້າແມ່ນພຣະບຸດອົງດຽວຜູ້ສະຖິດຢູ່ໃນຊວງອົກຂອງພຣະບິດາໄດ້ເປັນຜູ້ໄຂສຳແດງໃຫ້ພວກເຮົາຮູ້ຈັກພຣະອົງ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ພີ່ນ້ອງທີ່ຮັກແພງ, ພຣະເຈົ້າຊຶ່ງບໍ່ມີໃຜໄດ້ເຫັນ, ວັນນີ້ພຣະອົງໄດ້ປະຈັກມາໃຫ້ມະນຸດທຸກຄົນໄດ້ເຫັນຜ່ານທາງກຸມານນ້ອຍທີ່ນແພນອນຢູ່ໃນຮາງຫຍ້າ. ແຕ່ກ່ອນ, ພຣະເຈົ້າໄດ້ປາກເວົ້າກັບມະນຸດຜ່ານທາງບັນດາຜູ້ເລືອກສັນຂອງພຣະອົງ, ບັນດາປະພາສົກ. ບັດນີ້, ພຣະອົງໄດ້ປາກເວົ້າກັບພວກເຮົາຜ່ານທາງພຣະບຸດສຸດທີ່ຮັກຂອງພຣະອົງ. ເພາະພຣະອົງແມ່ນພຣະວາຈາຂອງພຣະເຈົ້າທີ່ລົງມາເກີດເປັນມະນຸດເພື່ອຢູ່ກັບພວກເຮົາ. ພຣະອົງແມ່ນອົງແຫ່ງຄວາມສະຫວ່າງທີ່ລົງມາສ່ອງສະຫວ່າງມະນຸດຜູ້ຈົມຢູ່ໃນຄວາມມືດຍ້ອນບາບອັນເປັນທີ່ມາຂອງຄວາມຕາຍ. ພຣະອົງເປັນຜູ້ທີ່ລົງມາເພື່ອເປີດເຜີຍໃຫ້ມະນຸດຮູ້ຈັກເຖິງຄວາມຮຸ່ງເຮືອງແລະສິມຸງຄຸນຂອງພຣະເຈົ້າ, ພຣະບິດາ. ສິມຸງຄຸນຂອງພຣະບິດາແມ່ນຄວາມຮັກທີ່ພຣະອົງຊົງມີຕໍ່ພວກເຮົາ. ສະຫລຸບແລ້ວ, ກຸມານນ້ອຍທີ່ທີ່ນແພນອນຢູ່ໃນຮາງຫຍ້ານັ້ນແມ່ນພຣະບຸດພຣະເຈົ້າ, ແມ່ນພຣະຜູ້ຊ່ວຍພວກເຮົາໃຫ້ຮອດຈາກຄວາມຕາຍຍ້ອນບາບ. ຜ່ານທາງພຣະອົງ, ພວກເຮົາສາມາດເຫັນພຣະບິດາ. ແລະຜ່ານທາງພຣະອົງ, ພວກເຮົາສາມາດໄປຫາພຣະບິດາເຈົ້າສະຫວັນໄດ້. ນີ້ແລແມ່ນຄວາມຍິນອັນຍິ່ງໃຫຍ່ທີ່ບໍ່ເຄີຍມີມາໃນປະຫວັດສາດ. ນີ້ແລແມ່ນພຣະຄຸນອັນຍິ່ງໃຫຍ່ທີ່ພຣະເຈົ້າປະທານໃຫ້ພວກເຮົາຜ່ານທາງພຣະເຢຊູກຸມານໃນວັນບຸນໂນແອນ. ແຕ່ພວກເຮົາສຳພັດໄດ້ເຖິງພຣະຄຸນອັນຍິ່ງໃຫຍ່ນີ້ສຳລັບພວກເຮົາບໍ? ພວກເຮົາເຫັນໄດ້ເຖິງຄວາມສຳຄັນຂອງການບັງເກີດມາຂອງພຣະເຢຊູເຈົ້າເພື່ອພວກເຮົາບໍ? ຫລືພວກເຮົາຍັງຢູ່ໃນຄວາມມ່ວນຊື່ນຂອງໂລກແລະທີ່ນເງົາແຫ່ງຄວາມມືດຂອງບາບ?

**ພາວະນາ**

ໂອພຣະເຢຊູກຸມານ, ອົງແຫ່ງແອນມານູແອນ, ໂຜດສະຖິດຢູ່ກັບລູກແລະຄອບຄົວຂອງລູກໃນວັນບຸນໂນແອນນີ້. ໂຜດເປີດຕາ, ເປີດໃຈ, ເປີດສະຕິປັນຍາຂອງລູກ, ເພື່ອລູກຈະໄດ້ເຫັນແລະສຳພັດໄດ້ເຖິງພຣະຄຸນອັນຍິ່ງໃຫຍ່ອັນແມ່ນພຣະບຸດຂອງພຣະເຈົ້າລົງມາເກີດເປັນມະນຸດເພື່ອຢູ່ກັບລູກແລະທຸກຄົນດ້ວຍເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ